ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ ສຳເລັດການເປັນປະທານຮ່ວມກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (Senior Level Committee: SLC) ຄັ້ງທີ 25 ແລະ ເຂົ້າຮ່ວມກອງປະຊຸມສຳມະນາລະດັບສູງ (High Level Seminar) ທີ່ ປະເທດ ອິນໂດເນເຊຍ




ໃນວັນທີ 06 ມີນາ 2023, ຄະນະນຳຂອງທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍ ທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ໄດ້ເຂົ້າຮ່ວມເປັນວິທະຍາກອນໃນກອງປະຊຸມສຳມະນາລະດັບສູງຮ່ວມກັບທ່ານຮອງຜູ້ວ່າການຈາກປະເທດ ອິນໂດເນເຊຍ, ສິງກະໂປ, ແລະ ໄທ ພາຍໃຕ້ຫົວຂໍ້: "ຈຸດສູນກາງແຫ່ງການເຕີບໂຕ (Epicentrum of Growth)" ຊຶ່ງຈຸດປະສົງຫຼັກແມ່ນເພື່ອແລກປ່ຽນຄວາມຄິດຄຳເຫັນ ກ່ຽວກັບວິທີການແກ້ໄຂກັບສິ່ງທ້າທາຍ ໂດຍສະເພາະຜົນກະທົບຈາກສະພາບການທີ່ບໍ່ແນ່ນອນໃນຕະຫຼາດການເງິນຂອງໂລກ ແລະ ພາກພື້ນອາຊຽນ, ການນຳໃຊ້ນະໂຍບາຍແບບປະສົມປະສານເຂົ້າໃນການຟື້ນຟູເສດຖະກິດຄືນໃໝ່ ແລະ ການເພີ່ມທະວີການຮ່ວມມືທາງດ້ານເສດຖະກິດຂອງອາຊຽນໃຫ້ມີຄວາມກວ້າງຂວາງຍິ່ງຂຶ້ນ ໂດຍສະເພາະໃນຍຸກການຫັນເປັນດີຈີຕອລ ແລະ ການປ່ຽນແປງຂອງສະພາບດິນຟ້າອາກາດ. ຄຽງຄູ່ກັນນັ້ນ, ທະນາຄານແຫ່ງ ສປປ ລາວ ຊຶ່ງໄດ້ຮັບກຽດເປັນປະທານຮ່ວມໂດຍທ່ານ ນ. ວັດທະນາ ດາລາລອຍ, ຮອງຜູ້ວ່າການ ທຫລ ແລະ ທ່ານ Leong Sing Chiong, ຮອງຜູ້ວ່າການທະນາຄານກາງສິງກະໂປ ໄດ້ສຳເລັດການເປັນປະທານຮ່ວມ ຂອງກອງປະຊຸມຄະນະກຳມະການລະດັບສູງວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ (SLC) ຄັ້ງທີ 25, ຊຶ່ງໄດ້ຈັດຂຶ້ນໃນວັນທີ 07 ມີນາ 2023 ໂດຍມີຜູ້ຕາງໜ້າຈາກບັນດາທະນາຄານກາງຂອງປະເທດສະມາຊິກອາຊຽນ, ກອງເລຂາອາຊຽນ (ASEC) ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງຄື: ທະນາຄານພັດທະນາອາຊີ (ADB), ແລະ ອົງການຕິດຕາມເສດຖະກິດມະຫາພາກອາຊຽນ+3 (AMRO) ເຂົ້າຮ່ວມໃນກອງປະຊຸມ.




ກອງປະຊຸມດັ່ງກ່າວໄດ້ຮັບຟັງການລາຍງານສະພາບເສດຖະກິດມະຫາພາກໃນປະຈຸບັນຂອງພາກພື້ນ ແລະ ສາກົນຈາກອົງການຈັດຕັ້ງສາກົນ ພ້ອມທັງໄດ້ຮັບຟັງການລາຍງານຄວາມຄືບໜ້າບັນດາໜ້າວຽກຕ່າງໆຂອງແຕ່ລະຄະນະກຳມະການ (WCs) ພາຍໃຕ້ວຽກງານການເຊື່ອມໂຍງການເງິນ-ເງິນຕາອາຊຽນ ເປັນຕົ້ນແມ່ນຜົນການຈັດຕັ້ງປະຕິບັດແຜນບູລິມະສິດປະຈຳປີ 2022 ຂອງແຕ່ລະຄະນະກຳມະການ ແລະ ການຂຶ້ນແຜນບູລິມະສິດໃນປີ 2023.

ກອງປະຊຸມໄດ້ດຳເນີນໄປເປັນເວລາໜຶ່ງວັນເຕັມໂດຍບັນດາປະເທດສະມາຊິກໄດ້ມີການປຶກສາຫາລື ແລະ ປະກອບຄຳເຫັນຢ່າງຟົດຟື້ນ ໂດຍທີ່ປະຊຸມໄດ້ຮັບຊາບ, ຮັບຮອງບັນຫາຕ່າງໆ ແລະ ໄດ້ໃຫ້ທິດຊີ້ນຳໃນການສືບຕໍ່ດຳເນີນວຽກງານທີ່ນອນໃນກອບວຽກງານການເຊື່ອມໂຍງຂະແໜງການເງິນອາຊຽນ ເພື່ອໃຫ້ສາມາດບັນລຸເປົ້າໝາຍທີ່ຂຶ້ນໄວ້ຂອງແຕ່ລະຄະນະ. ໃນນີ້, ຍັງມີຫຼາຍບັນຫາທີ່ຈະຕ້ອງໄດ້ສືບຕໍ່ຄົ້ນຄວ້າ ເພື່ອກະກຽມໄປລາຍງານ ແລະ ຮັບຮອງໃນກອງປະຊຸມລະດັບລັດຖະມົນຕີການເງິນ ແລະ ຜູ້ວ່າການທະນາຄານກາງອາຊຽນ (AFMGM) ຊຶ່ງຈະໄດ້ຈັດຂຶ້ນໃນລະຫວ່າງວັນທີ 28-31 ເດືອນ ມີນາ 2023 ທີ່ ບາຫຼີ, ປະເທດອິນໂດເນເຊຍ.

ຂ່າວ ແລະ ພາບໂດຍ: ກົມຮ່ວມມືສາກົນ

*ຄົນລາວຮັກເມືອງລາວໃຊ້ເງິນກີບລາວ*